**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງຫລວງພະບາງ

ເລກທີ...010.../ຈຂ.ຫຼບ

ລົງວັນທີ.....2....ທັນວາ(12) 2014

# ຄຳສັ່ງ

## ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາ ຝຸ່ນ, ແນວພັນພືດ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດອື່ນໆ ພາຍໃນແຂວງຫລວງພະບາງ

**ເຖິງ:** ບັນດາທ່ານຫົວໜ້າພະແນກການ, ທ່ານເຈົ້າເມືອງ, ທະຫານ, ຕຳຫລວດ, ບໍລິສັດ, ຫ້າງຮ້ານ, ຊາວກະສິກອນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງຫລວງພະບາງ.

- ອີງຕາມ: ຄຳສັ່ງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາຝຸ່ນ, ແນວພັນພືດ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດອື່ນໆ ສະບັບເລກທີ 2592/ກປ, ລົງວັນທີ 15/08/2014.
- ອີງຕາມ: ບົດບັນທຶກການປຶກສາຫາລື ແບ່ງຂອດຄຸ້ມຄອງຄວາມປອດໄພ ແລະ ມາດຕະຖານອາຫານ ລະຫວ່າງ ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງອຸດສະຫະກຳ ແລະ ການຄ້າ ສະບັບລົງວັນທີ 06 ສິງຫາ 2014.
- ອີງຕາມ: ໃບສະເໜີຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 1070/ກປ.ຫຼບ, ລົງວັນ ທີ 22/09/2014.

ໃນໄລຍະຜ່ານມາ ບັນດາພະແນກການອ້ອມຂ້າງແຂວງ, ອຳນາດການປົກຄອງເມືອງ ແລະ ການຈັດຕັ້ງທຸກຂັ້ນ ໄດ້ໃຫ້ການຮ່ວມມືເປັນຢ່າງດີ ຕໍ່ກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການນຳເຂົ້າປັດໄຈຮັບໃຊ້ການຜະລິດກະສິກຳ ເປັນຕົ້ນແມ່ນ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ອັນໄດ້ເຮັດໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ໄດ້ຊົມໃຊ້ປັດໄຈຮັບໃຊ້ການຜະລິດທີ່ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ລະບຽບກົດໝາຍ ເຊິ່ງໄດ້ປະກອບສ່ວນເຂົ້າໃນການຍົກສະມັດຕະພາບການຜະລິດໃຫ້ສູງຂຶ້ນ, ສ້າງລາຍຮັບໃຫ້ຊາວກະສິກອນ ແລະ ຜູ້ປະກອບການໄດ້ເປັນຢ່າງດີ; ແຕ່ຄຽງຄູ່ກັນນັ້ນ ກໍຍັງມີຜູ້ປະກອບການຈຳນວນໜຶ່ງ ນຳເຂົ້າປັດໄຈຮັບໃຊ້ການຜະລິດ ເຊັ່ນ: ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າທີ່ຫ້າມນຳໃຊ້ ແຕ່ຊ້ຳພັດລັກລອບນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ຢ່າງຊະຊາຍ ໂດຍບໍ່ຄຳນຶງເຖິງຜົນກະທົບຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ອັນໄດ້ສ້າງພາບພົດບໍ່ດີໃຫ້ແກ່ການຊີ້ນຳ-ນຳພາທາງດ້ານເຕັກນິກວິຊາການຂອງພະແນກການທີ່ກ່ຽວຂ້ອງ.

## ເຈົ້າແຂວງຫລວງພະບາງ ອອກຄຳສັ່ງ:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງຫລວງພະບາງ ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ດ່ານປະເພນີ ແລະ ໜ່ວຍງານປູກຝັງເມືອງ ໃນການຄຸ້ມຄອງກວດກາການນຳເຂົ້າຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຈາກຕ່າງປະເທດ ເຂົ້າມາພາຍໃນທ້ອງຖິ່ນຂອງຕົນຢ່າງເຂັ້ມງວດ ຕາມເຕັກນິກ ແລະ ລະບຽບການ ໂດຍມີການປະສານສົມທົບກັບພະແນກການກ່ຽວຂ້ອງ ເປັນຕົ້ນພະແນກອຸດສາຫະກຳ ແລະ ການຄ້າ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການພາສີປະຈຳເຂດ 2, ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ພະແນກສາທາລະນະສຸກ ເພື່ອຈັດຕັ້ງເປັນຄະນະຊີ້ນຳ ແລະ ຄະນະກຳມະການໃນການຕິດຕາມ ແລະ ກວດກາ;

2. ບໍ່ອະນຸຍາດໃຫ້ໂຄງການພັດທະນາພາກລັດ, ພາກທຸລະກິດ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ນຳເຂົ້າຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ທີ່ບໍ່ໄດ້ຈົດທະບຽນວິຊາການ ຕາມລະບຽບກົດໝາຍຂອງ ສປປ ລາວ;

3. ໃຫ້ມີຮ້ານຈຳໜ່າຍສະເພາະຝຸ່ນ, ແນວພັນ ແລະ ຢາປາບສັດຕູພືດ, ບໍ່ໃຫ້ວາງປະປົນກັບສິນຄ້າບໍລິໂພກ ແລະ ອຸປະໂພກອື່ນໆ;

4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ອອກໃບອະນຸຍາດນຳເຂົ້າ ແລະ ຈຳໜ່າຍຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍອີງໃສ່ບັນຊີທີ່ໄດ້ຮັບການຈົດທະບຽນວິຊາການນຳກົມປູກຝັງ ຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງສປປລາວ;

5. ພະແນກອຸດສະຫະກຳ ແລະ ການຄ້າ, ກອງບັນຊາການປ້ອງກັນຄວາມສະຫງົບ, ພາສີປະຈຳເຂດ 2 ໃຫ້ການຮ່ວມມື ຕິດຕາມກວດກາ ຄວາມຖືກຕ້ອງດ້ານເອກະສານ ໃນເວລານຳເຂົ້າປັດໄຈການຜະລິດ ແລະ ຫຼັງການນຳເຂົ້າ;

6. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຕິດຕາມ ກວດກາ ຄຸນນະພາບປັດໄຈການຜະລິດ ແລະ ສຸ່ມເກັບຕົວຢ່າງຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໃນສະຖານທີ່ຈຳໜ່າຍ ແລະ ນຳໃຊ້ ເພື່ອໃຫ້ຊາວກະສິກອນໄດ້ນຳໃຊ້ຜະລິດຕະພັນຖືກຕ້ອງຕາມມາດຕະຖານທີ່ໄດ້ຂຶ້ນທະບຽນໄວ້;

7. ໃຫ້ພະແນກກະສິກຳ ແລະປ່າໄມ້ ປະສານສົມທົບກັບ ພະແນກການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງເມືອງ ແລະ ການຈັດຕັ້ງທຸກຂັ້ນໃນການຄຸ້ມຄອງ, ກວດກາການບໍລິການຈຳໜ່າຍຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ພາຍໃນທ້ອງຖິ່ນຂອງຕົນ ຕາມລະບຽບກົດໝາຍ, ລວມທັງກວດກາ ແລະ ສະກັດກັ້ນ ບຸກຄົນ ແລະ ພາຫະນະທີ່ບັນທຸກຝຸ່ນ, ຢາປາບສັດຕູພືດ ແລະ ແນວພັນພືດ ທີ່ເລາະຂາຍ ຫລື ຈຳໜ່າຍ ຕາມບ້ານ ແລະ ກຸ່ມບ້ານຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

8. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຕິດຕາມ ລະດັບສານເຄມີຕົກຄ້າງໃນພືດ ແລະ ຜະລິດຕະພັນພືດສົດ ໃນພື້ນທີ່ການຜະລິດ ແລະ ຕະຫລາດ ເພື່ອຮັບປະກັນໃຫ້ປະຊາຊົນ ສາມາດບໍລິໂພກດ້ວຍຄວາມປອດໄພ;

9. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບ ອຳນາດການປົກຄອງເມືອງ ແລະ ການຈັດຕັ້ງທຸກຂັ້ນເຜີຍແຜ່, ໃຫ້ຄວາມຮູ້ແກ່ຊາວກະສິກອນ, ກຸ່ມຜະລິດ ແລະ ຜູ້ປະກອບການ ກ່ຽວກັບການເກັບຮັກສາ ແລະ ນຳໃຊ້ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຖືກຕ້ອງຕາມຫຼັກວິຊາການ;

10. ໃຫ້ຄະນະກຳມະການຄຸ້ມຄອງ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ລົງກວດກາ ການຈຳໜ່າຍປັດໃຈດັ່ງກ່າວ ຕາມຮ້ານຄ້າ, ຫ້ອງຕະຫຼາດ ແລະ ພື້ນທີ່ການປູກຝັງ;

11. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ປະຕິບັດຕາມລະບຽບກົດໝາຍ ຄວນໄດ້ຮັບການຍ້ອງຍໍ, ສຳລັບຜູ້ລະເມີດ ໃຫ້ຄະນະກຳມະການ ປັບໃໝ, ອາຍັດ, ຍຶດ ແລະ ລົງໂທດ ແລ້ວແຕ່ກໍລະນີໜັກ ຫຼື ເບົາ;

12. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້, ບັນດາພະແນກການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເປັນເຈົ້າການ ຊີ້ນຳຂະແໜງການຂອງຕົນ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ມີຜົນສຳເລັດສູງ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານ ຄະນະຊີ້ນຳຂັ້ນແຂວງ ຊາບເປັນປົກກະຕິ ເພື່ອຄົ້ນຄວ້າພິຈະລະນາ ແລະ ແກ້ໄຂ ໃຫ້ຖືກຕ້ອງ ແລະ ທັນການ;

13. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງຫຼວງພະບາງ

ດຣ.ຄຳແພງ ໄຊສົມແພງ

ບ່ອນນຳສົ່ງ:

| | |
|---|---|
| - ເຈົ້າເມືອງ 12 ເມືອງໆລະ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ພະແນກກະສິກຳ ແລະ ປ່າໄມ້ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ພະແນກອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ພາສີປະຈຳເຂດ 2 | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ພະແນກ ຊສ ແຂວງ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ພະແນກສາທາລະນະສຸກ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ກອງບັນຊາການປ້ອງກັນຄວາມສະຫງົບ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ຫ້ອງວ່າການແຂວງ | 01 ສະບັບ (ເພື່ອຊຸກຍູ້ການຈັດຕັ້ງປະຕິບັດ) |
| - ສຳເນົາ | 02 ສະບັບ |